ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 21 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 17 MAY 2021

# ແຈ້ງການ

ເຖິງ : ທ່ານ ຜູ້ອຳນວຍການ ທະນາຄານທຸລະກິດ ທີ່ສ້າງຕັ້ງ ຢູ່ ສປປ ລາວ.
ເລື່ອງ : ການຂໍຮັບຮອງເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງ ບັນດາທະນາຄານທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ທີ່ມີຈຸດປະສົງເປັນ ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕ້ອງຂໍການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍປະຕິບັດຕາມແຈ້ງການສະບັບນີ້ ດັ່ງນີ້:

**1. ເງື່ອນໄຂການຂໍຮັບຮອງ**

1) ມີລະບົບສາມາດເຊື່ອມຕໍ່ ກັບບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ຫຼື ທະນາຄານຕົວແທນເພື່ອການຊຳລະອື່ນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ;
2) ມີຄວາມພຽງພໍຂອງທຶນ ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
3) ມີຄວາມພ້ອມໃນການໃຫ້ບໍລິການ ເພື່ອຮັບປະກັນໃຫ້ແກ່ຜູ້ລົງທຶນໃນການເຄື່ອນໄຫວຊື້ ຂາຍຫຼັກຊັບ ໂດຍສະເພາະທາງດ້ານ ບຸກຄະລາກອນ, ການບໍລິຫານຄວາມສ່ຽງ ແລະ ຄວາມພ້ອມດ້ານອື່ນຕາມຄວາມຈຳເປັນ.

**2. ເອກະສານປະກອບການຂໍການຮັບຮອງ**

1) ໃບຄຳຮ້ອງຂໍເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2) ສຳເນົາ ມະຕິກອງປະຊຸມສະພາບໍລິຫານ ກ່ຽວກັບແຜນການຂໍເປັນທະນາຄານຕົວແທນເພື່ອການຊຳລະ;
3) ເອກະສານລາຍງານຄວາມພຽງພໍຂອງທຶນ ປະຈຳປີ;

4) ຮ່າງ ແລະ ສັນຍາລະຫວ່າງທະນາຄານທຸລະກິດທີ່ມີຈຸດປະສົງຂໍຮັບຮອງເປັນຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ ກັບ ບໍລິສັດຫຼັກຊັບ;
5) ເອກະສານຢັ້ງຢືນການເຊື່ອມຕໍ່ ກັບບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ຫຼື ທະນາຄານຕົວແທນເພື່ອການຊໍາລະອື່ນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ.

**3. ການພິຈາລະນາຂໍການຮັບຮອງ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງຈະພິຈາລະນາເອກະສານປະກອບຂໍການຮັບຮອງເປັນທະນາຄານຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ ພາຍໃນກໍານົດເວລາ 10 ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ. ກໍລະນີປະຕິເສດ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈະແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນ 5 ວັນລັດຖະການ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກະມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

**4. ການປະກາດໃຫ້ມວນຊົນຊາບ**

ພາຍຫຼັງໄດ້ຮັບໃບຮັບຮອງ ເປັນທະນາຄານຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ ແລ້ວ ທະນາຄານຕົວແທນເພື່ອການຊໍາລະດັ່ງກ່າວ ຕ້ອງປະກາດໃຫ້ມວນຊົນຊາບ ໂດຍຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ 5 ວັນລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບໃບຮັບຮອງເປັນຕົ້ນໄປ.

**5. ຂອບເຂດການໃຫ້ບໍລິການ**

1) ເປີດບັນຊີເງິນເພື່ອຊື້ ຂາຍຫຼັກຊັບ ໃຫ້ແກ່ຜູ້ລົງທຶນ;
2) ດໍາເນີນທຸລະກໍາທາງດ້ານການເງິນ ຕາມສະເໜີຂອງຜູ້ລົງທຶນ;
3) ໃຫ້ບໍລິການອື່ນ ຕາມການກໍານົດຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**6. ການລາຍງານ**

ທະນາຄານຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ ຕ້ອງລາຍງານ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທັນທີ ກໍລະນີ ບໍ່ສາມາດໃຫ້ບໍລິການ ກ່ຽວກັບການເຄື່ອນໄຫວຊື້ ຂາຍຫຼັກຊັບ ຂອງຜູ້ລົງທຶນໄດ້.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຫົວໜ້າສໍານັກງານ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ສໍານັກງານ ຄຄຊ

**ສາຍສະໝອນ ຈັນທະຈັກ**